# ກອງປະຊຸມຫຼາຍຝ່າຍ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI)

10 ພະຈິກ 2021, ສປປ ລາວ

## (ແລກປ່ຽນບົດຮຽນ) ການລົງທຶນປູກກ້ວຍຢູ່ແຂວງຫຼວງພະບາງ


ນຳສະເໜີໂດຍ: ທ່ານ ປອ ສີທະລອນ ສີໂພໄຊ

ຕຳແໜ່ງ: ຫົວໜ້າຂະແໜງສົ່ງເສີມການລົງທຶນ

ຊື່ອົງການຈັດຕັ້ງ: ພະແນກແຜນການ ແລະ ການລົງທຶນ

ຂໍ້ມູນການຕິດຕໍ່: 020-56662995





Food and Agriculture Organization of the United Nations

ສະຫະພາບ ເອີຣົບ
European Union

german cooperation
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ເນື້ອໃນ

1. ຈຳນວນບໍລິສັດ ແລະ ເນື້ອທີ່ປູກກ້ວຍ ຢູ່ແຂວງຫຼວງພະບາງໃນປະຈຸບັນ.
2. ການປູກກ້ວຍກ່ອນມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019.
3. ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019.
4. ຂໍ້ສະເໜີ ແລະ ຄຳຖາມແລກປ່ຽນ.

# ຫົວຂໍ້ທີ 1
## ຈຳນວນບໍລິສັດ ແລະ ເນື້ອທີ່ປູກກ້ວຍ ຢູ່ແຂວງຫຼວງພະບາງໃນປະຈຸບັນ

- ການລົງທຶນປູກກ້ວຍຢູ່ພາຍໃນແຂວງຫຼວງພະບາງ ປະຈຸບັນ ມີທັງໝົດ 13 ບໍລິສັດ (ກ່ອນ 0457 ມີ 11 ບໍລິສັດ, ຫຼັງ 0457 ມີ 2 ບໍລິສັດ), ລວມມີເນື້ອທີ່ 1.492,66 ເຮັກຕາ, ໃນນັ້ນ:

- ເມືອງຊຽງເງິນ: ມີ 1 ບໍລິສັດ ມີເນື້ອທີ່ 21,66 ເຮັກຕາ (ນັກລົງທຶນຈີນເຊົ່າດິນປະຊາຊົນ).
- ເມືອງນານ: ມີ 4 ບໍລິສັດ ມີເນື້ອທີ່ 726,61 ເຮັກຕາ (ນັກລົງທຶນຈີນເຊົ່າດິນປະຊາຊົນ).
- ເມືອງນ້ຳບາກ: ມີ 7 ບໍລິສັດ ມີເນື້ອທີ່ 602,61 ເຮັກຕາ (ໃນນັ້ນ: ນັກລົງທຶນຈີນເຊົ່າດິນປະຊາຊົນ 6 ບໍລິສັດ ແລະ ນັກລົງທຶນລາວສຳປະທານດິນລັດ 1 ບໍລິສັດ).
- ເມືອງງອຍ: ມີ 1 ບໍລິສັດ ມີເນື້ອທີ່ 149,78 ເຮັກຕາ (ເຊົ່ນດິນປະຊາຊົນ).

## ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄໍາແນະນໍາ ເລກທີ 0457/ກຜທ, ລົງວັນທີ 27/02/2019

- ການປູກກ້ວຍຢູ່ແຂວງຫຼວງພະບາງ ໄດ້ເລີ່ມປູກແຕ່ປີ 2012 ເປັນຕົ້ນມາ.
- ການປູກກ້ວຍຜ່ານມາ ແມ່ນບັນດາບໍລິສັດ (ນັກລົງທຶນຊາວຈີນ) ໄດ້ເຊົ່າດິນປະຊາຊົນ.
- ການລົງທຶນປູກກ້ວຍເປັນກິດຈະການທົ່ວໄປ (ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009, ໃນເວລານັ້ນ ມີພຽງກິດຈະການສໍາປະທານ ແລະ ກິດຈະການທົ່ວໄປ, ເຊິ່ງບໍ່ທັນມີກິດຈະການທົ່ວໄປໃນບັນຊີຄວບຄຸມ).
- ການລົງທຶນປູກກ້ວຍ ຈຶ່ງບໍ່ໄດ້ຄົ້ນຄວ້າຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ແລະ ບໍ່ໄດ້ມີໃບອະນຸຍາດລົງທຶນ.

## ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄໍາແນະນໍາ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ການປະກອບເອກະສານການລົງທຶນໃນເວລານັ້ນ ກໍ່ບໍ່ເອກະພາບກັນ ເຊັ່ນ:

- ບາງຫົວໜ່ວຍມີພຽງໃບທະບຽນວິສາຫະກິດ ຈາກ ພະແນກອຸດສາຫະກໍາ ແລະ ການຄ້າ.
- ບາງຫົວໜ່ວຍມີພຽງໃບອະນຸຍາດດໍາເນີນທຸລະກິດ ຈາກ ພະແນກກະສິກໍາ ແລະ ປ່າໄມ້.
- ບາງຫົວໜ່ວຍມີເອກະສານອະນຸມັດຂັ້ນເມືອງ.
- ມີໃບທະບຽນອາກອນ ແຕ່ບໍ່ມີການຖືບັນຊີຕາມຮູບແບບສ່ວຍສາອາກອນປະຈໍາແຂວງກໍານົດໃຫ້.
- ທຸກຫົວໜ່ວຍໄດ້ມີສັນຍາເຊົ່າດິນກັບປະຊາຊົນ (ໂດຍສັນຍາແຕ່ລະບໍລິສັດ ກັບ ເຈົ້າຂອງດິນກໍ່ບໍ່ຄືກັນ) ແລະ ກໍ່ບໍ່ໄດ້ລະບຸລະອຽດຝ່າຍໃດເປັນຜູ້ເສຍອາກອນລາຍໄດ້ຈາກການເຊົ່າ ແລະ ຜູ້ໃດເປັນຜູ້ເສຍຄ່າທານຽມທີ່ດິນ/ພາສີທີ່ດິນ ໃຫ້ພາກລັດໃນແຕ່ລະປີ (ບາງເມືອງບໍ່ສມາດເກັບລາຍຮັບພັນທະອາກອນດັ່ງກ່າວນີ້ໄດ້).

# ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ຮອດປີ 2015 ໄດ້ມີແຈ້ງການລັດຖະບານໃຫ້ໂຈະໂຄງການປູກກ້ວຍ (ໂດຍສະເພາະດິນນາ).
- ແຕ່ທາງແຂວງຫຼວງພະບາງເຫັນໄດ້ເຖິງບໍລິສັດທີ່ລົງທຶນມາກ່ອນໜ້ານັ້ນ ໄດ້ມີການເຊັນສັນຍາເຊົ່າທີ່ດິນກັບປະຊາຊົນ ແລະ ໄດ້ຈ່າຍເງິນລ່ວງໜ້າແກ່ເຈົ້າຂອງດິນໄປແລ້ວ.
- ການປະກອບເອກະສານການລົງທຶນ ກໍ່ເຫັນວ່າມີຈຳນວນໜຶ່ງເປັນພື້ນຖານ (ເຖິງວ່າບໍ່ຄົບຖ້ວນ).
- ບໍລິສັດໄດ້ປະກອບສ່ວນລົງທຶນພັດທະນາພື້ນຖານໂຄງລ່າງຈຳນວນໜຶ່ງ ເຊັ່ນ: ເສັ້ນທາງເຂົ້າຫາສວນກ້ວຍ (ປະຊາຊົນໄດ້ນຳໃຊ້), ດຶງຕາຄ່າຍໄຟຟ້າ, ການຕິດຕັ້ງລະບົບນ້ຳ, ນຳເຂົ້າເບ້ຍກ້ວຍ, ວັດສະດຸ-ອຸປະກອນ ແລະ ເຄື່ອງມືອື່ນໆ.

# ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄໍາແນະນໍາ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ເພື່ອແກ້ໄຂບັນຫາດັ່ງກ່າວ (ໃຫ້ບໍລິສັດໄດ້ເກັບກູ້ທຶນຄືນ), ອົງການປົກຄອງແຂວງ ໄດ້ມີແຈ້ງການມອບໃຫ້ ພະແນກແຜນການ ແລະ ການລົງທຶນ ເຮັດສັນຍາຄຸ້ມຄອງສວນກ້ວຍກັບບໍລິສັດ.
- ກໍານົດສັນຍາ 05 ປີ ຮອດປີ 2020 ໃຫ້ຢຸດເຊົາເດັດຂາດ ຫຼື ໄປປູກພືດສະນິດອື່ນ.
- ຜ່ານການເຈລະຈາມີຫຼາຍປັດໃຈບໍລິສັດບໍ່ສາມາດຮັບໄດ້ ເຊັ່ນ: ມອບເງິນຄໍ້າປະກັນຟື້ນຟູທີ່ດິນ, ເກັບມ້ຽນສິ່ງເສດເຫຼືອ ແລະ ແບ່ງເຂດດິນຄືນໃຫ້ເຈົ້າຂອງດິນ ເປັນຈໍານວນ 10 ລ້ານກີບ/ເຮັກຕາ.
- ຕົກມາຮອດຕົ້ນປີ 2017 ຈຶ່ງສາມາດເຮັດສັນຍາກັບນັກລົງທຶນປູກກ້ວຍໄດ້, ສະນັ້ນ ອາຍຸສັນຍາຈຶ່ງໄດ້ກໍານົດພຽງ 03 ປີ, ແຕ່ປີ 2017-2020 (ແຕ່ເວລານັ້ນບໍ່ທັນມີດໍາລັດບັນຊີຄວບຄຸມ ເບື້ອງລັດຈຶ່ງບໍ່ສາມາດອອກໃບອະນຸຍາດລົງທຶນໃຫ້ບໍລິສັດໄດ້), ໂດຍເງື່ອນໄຂໄດ້ຕົກລົງກັນ ດັ່ງນີ້:

# ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ບໍລິສັດມອບເງິນຄ້ຳປະກັນຟື້ນຟູທີ່ດິນ-ເກັບມ້ຽນສິ່ງເສດເຫຼືອ 5 ລ້ານກີບ/ເຮັກຕາ/ອາຍຸສັນຍາ (ໂດຍມອບເປັນ 2 ງວດ, ປີ 2017: ຈຳນວນ 2,5 ລ້ານ, ປີ 2018: 2,5 ລ້ານ), ຈຳນວນເງິນດັ່ງກ່າວ ບາງບໍລິສັດໄດ້ໂອນເຂົ້າບັນຊີ ພຜທ ທີ່ເປີດໄວ້ຢູ່ຄັງເງິນ ແລະ ບາງບໍລິສັດໄດ້ເປີດບັນຊີຮ່ວມກັບ ພຜທ ໂດຍດອກເບ້ຍມອບໃຫ້ບໍລິສັດ.
- ມອບເງິນຕິດຕາມ-ກວດກາ ສວນກ້ວຍໃຫ້ແກ່ພາກລັດ 300.000 ກີບ/ເຮັກຕາ, ໃນນັ້ນ:
  - ✓ 100.000 ກີບ/ເຮັກຕາ/ປີ ພະແນກແຜນການ-ການລົງທຶນ ຄຸ້ມຄອງຮັກສາໄວ້ ໂດຍນຳໃຊ້ຮ່ວມກັບພະແນກການທີ່ກ່ຽວຂ້ອງ (ຂຶ້ນແຜນນຳໃຊ້).
  - ✓ 200.000 ກີບ/ເຮັກຕາ/ປີ ມອບໃຫ້ ຫ້ອງການແຜນການ ແລະ ການລົງທຶນເມືອງ ຄຸ້ມຄອງນຳໃຊ້ຮ່ວມກັບຫ້ອງການທີ່ກ່ຽວຂ້ອງ (ພາຍໃຕ້ການຊີ້ນຳທ່ານເຈົ້າເມືອງ).

## ຫົວຂໍ້ທີ 2

## ການປູກກ້ວຍກ່ອນມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- **ຜ່ານການດຳເນີນໂຄງການປູກກ້ວຍຜ່ານມາ:**
  - ເຈົ້າຂອງດິນໄດ້ຮັບຄ່າເຊົ່າ,
  - ສ່ວນພາກລັດກໍ່ໄດ້ຮັບພັນທະອາກອນຕ່າງໆ.
  - ບໍລິສັດປະກອບພັດທະນາພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງ.
  - ແຮງງານ (ປະຊາຊົນ) ທ້ອງຖິ່ນໄດ້ມີວຽກເຮັດງານທຳ ດ້ວຍການອອກແຮງງານບົວລະບັດຮັກສາກ້ວຍ, ເສຍຫຍ້າສວນກ້ວຍ ເດືອນລະ 1 ລ້ານກວ່າກີບ ແລະ ຜູ້ອອກແຮງງານຕັດເຄືອກ້ວຍ ຄິດໄລ່ 1 ກິໂລ/350 ກີບ.
  - ຫຼາຍພາກບໍ່ເຂົ້າໃຈ ແລະ ເປັນຫ່ວງບັນຫາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ.

# ຫົວຂໍ້ທີ 3

## ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019

- ພາຍຫຼັງມີ 0457 ທາງແຂວງແມ່ນໄດ້ປະຕິບັດຢ່າງມີຄວາມຮັບຜິດຊອບຕາມຂັ້ນຕອນ:
  - ຜູ້ລົງທຶນປະສານກັບເຈົ້າຂອງດິນແຕ່ລະເຈົ້າ ເພື່ອຢັ້ງຢືນການເຫັນດີ (ລົງລາຍເຊັນ) ໂດຍບໍ່ໃຫ້ມອບເງິນເທື່ອ, ຈາກນັ້ນ ຢັ້ງຢືນບ້ານ (ນາຍບ້ານ) ແລະ ອົງການປົກຄອງເມືອງ.
  - ອົງການປົກຄອງເມືອງນຳສະເໜີຫ້ອງການປະຕູດຽວ (ພະແນກແຜນການ ແລະ ການລົງທຶນ) ເພື່ອພິຈາລະນາຕາມຂັ້ນຕອນຂອງກົດໝາຍ.

# ຫົວຂໍ້ທີ 3

## ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ພາຍຫຼັງແຂວງເຫັນດີ ຈຶ່ງມອບແບບຟອມສັນຍາເຊົ່າທີ່ດິນທີ່ພາກລັດກຳນົດຂຶ້ນເພື່ອລົງນາມກັບເຈົ້າຂອງດິນ ແລະ ຈຶ່ງມອບເງິນຄ່າເຊົ່າ ໂດຍບໍລິສັດຮັບຜິດຊອບຈ່າຍອາກອນລາຍໄດ້ຈາກຄ່າເຊົ່າທີ່ດິນໃຫ້ແກ່ລັດ, ສ່ວນເຈົ້າຂອງດິນຮັບຜິດຊອບຈ່າຍຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ).
- ສັນຍາຄຸ້ມຄອງສວນກ້ວຍ ແມ່ນເຊັນກັນ ລະຫວ່າງ ພຜທ ກັບ ບໍລິສັດ ໂດຍນຳໃຊ້ ແບບຟອມທີ່ ກ/ຊ ຜທ ຮ່ວມກັບ GIZ ໄດ້ຄົ້ນຄວ້າຮ່າງຂຶ້ນ.

# ຫົວຂໍ້ທີ 3

## ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ສະນັ້ນ, ພາຍຫຼັງ 0457 ຫຼຸບ ໄດ້ອະນຸຍາດ 2 ບໍລິສັດ (ມີໃບອະນຸຍາດລົງທຶນ) ຄື:
  - ສຳປະທານ 1 ບໍລິສັດ (ວາງເງິນຄ້ຳປະກັນ 30.000 $) ໃນເນື້ອທີ່ບໍ່ເກີນ 150 ເຮັກຕາ.
  - ເຊົ່າດິນປະຊາຊົນ 1 ບໍລິສັດ (ວາງເງິນຄ້ຳປະກັນ 750 $/ເຮັກຕາ). ໂດຍແບ່ງຈ່າຍເປັນ 3 ງວດ, ສ່ວນໄລຍະການແບ່ງຈ່າຍໄດ້ປະຕິບັດດັ່ງນີ້:
    - ✓ ງວດທີ 1 : ມອບ 30% ໂດຍມອບປີທີ 2 ຂອງອາຍຸສັນຍາ.
    - ✓ ງວດທີ 2: ມອບ 30% ໂດຍມອບປີທີ 3 ຂອງອາຍຸສັນຍາ.
    - ✓ ງວດທີ 3: ມອບ 40% ໂດຍມອບປີທີ 4 ຂອງອາຍຸສັນຍາ.
- ສ່ວນເງິນຕິດຕາມ-ກວດກາ ໄດ້ເຈລະຈາກັບບໍລິສັດ ໂດຍເກັບຄືເກົ່າ 300.000 ກີບ/ເຮັກຕາ/ປີ ແລະ ແບ່ງໃຫ້ເມືອງ 200.000 ກີບ, ແຂວງຮັກສາໄວ້ 100.000 ກີບ.

## ຫົວຂໍ້ທີ 3

## ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ສ່ວນໃບຢັ້ງຢືນສິ່ງແວດລ້ອມນັ້ນ, ຖ້າອີງໃສ່ຄຳແນະນຳ ເລກທີ 0457 ໄດ້ລະບຸ ວ່າ: ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເບື້ອງຕົ້ນ (ຖ້າມີ), ສະນັ້ນ ການຈັດຕັ້ງປະຕິບັດຢູ່ແຂວງຫຼວງພະບາງ ໄດ້ປະຕິບັດດັ່ງນີ້:
  - ຖ້າແມ່ນທີ່ດິນ ທີ່ບໍລິສັດເຊົ່າກັບປະຊາຊົນ ມອບໃຫ້ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຢັ້ງຢືນດ້ານສິ່ງແວດລ້ອມ.
  - ຖ້າແມ່ນການສຳປະທານທີ່ດິນຂອງລັດ ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຢັ້ງຢືນດ້ານສິ່ງແວດລ້ອມ; ວາງເງິນຄ້ຳປະກັນ ຄື: 30.000$ (ເນື້ອທີ່ 150 ເຮັກຕາລົງມາ); 50.000$ (ເນື້ອທີ່ 151 ເຮັກຕາ-1.000 ເຮັກຕາ); 70.000$ (ເນື້ອທີ່ 1001 ເຮັກຕາ ຂຶ້ນໄປ).

## ຫົວຂໍ້ທີ 3

## ການປູກກ້ວຍຫຼັງມີຄຳແນະນຳ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ເສຍຄ່າຊັບພະຍາກອນນ້ຳທຳມະຊາດ ທີ່ນຳໃຊ້ໃນການປູກກ້ວຍຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍອດຕາຄ່າຊັບພະຍາກອນທຳມະຊາດ ສະບັບເລກທີ 001/ປປທ, ລົງວັນທີ 15/12/2015 ໂດຍກຳນົດໃນອັດຕາ 5 ກີບຕໍ່ແມັດກ້ອນ (5 ກີບ/m³).
- **ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ:**
  - ບໍລິສັດມີຄວາມຮັບຜິດຊອບຍິ່ງຂຶ້ນ ໂດຍມອບເງິນຕິດຕາມ-ກວດກາ ໃຫ້ແກ່ພາກລັດ ຈຳນວນ 300.000 ກີບ/ເຮັກຕາ/ປີ (ຈົນຄົບອາຍຸສັນຍາ) ເພື່ອອຳນວຍຄວາມສະດວກວຽກງານຕິດຕາມ-ກວດກາ ໂດຍໃຫ້ມອບໃຫ້ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂຶ້ນແຜນນຳໃຊ້ ແລະ ເບີກຈ່າຍນຳ ພຜທ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ເມືອງ.

# ຫົວຂໍ້ທີ 3
## ການປູກກ້ອຍຫຼັງມີຄໍາແນະນໍາ ເລກທີ 0457/ກຜທ, ລົງວັນທີ 27/02/2019 (ຕໍ່)

- ຫລາຍບໍລິສັດ ໄດ້ຄ່ອຍໆຫັນປ່ຽນເຂົ້າສູ່ລະບຽບ ແລະ ເຂົ້າໃຈຕໍ່ກົດໝາຍຂອງ ສປປ.ລາວ ຍິ່ງຂຶ້ນ ດ້ວຍການອໍານວຍຄວາມສະດວກໃຫ້ແກ່ພະນັກງານພາກລັດລົງປະເມີນ ແລະ ເຮັດບົດບັນທຶກ ກັບ ຮ່ວມກັນ ໂດຍກໍານົດໃຫ້ບໍລິສັດປັບປຸງບັນຫາທີ່ຄົງຄ້າງ ເປັນແຕ່ລະໄລຍະ ໂດຍນໍາໃຊ້ຕາຕະລາງ ຫຼື ແບບປະເມີນຂອງ ກ/ຊ ຜທ ແລະ GIZ ຮ່າງຂຶ້ນ.
- ທາງສຽງຄວາມບໍ່ເຂົ້າໃຈຂອງສັງຄົມຄ່ອຍໆຫລຸດລົງ.

# ຫົວຂໍ້ທີ 4
## ຂໍ້ສະເໜີ ແລະ ຄຳຖາມແລກປ່ຽນ

- ສວນກ້ວຍເກົ່າ (ສະເພາະເນື້ອທີ່ເກົ່າ) ທີ່ໝົດສັນຍາ, ຖ້າບໍລິສັດຈະສືບຕໍ່ ເງິນຄ້ຳປະກັນຟື້ນຟູທີ່ດິນ ຄວນຮັກສາ 5 ລ້ານກີບ/ເຮັກຕາ/ອາຍຸສັນຍາ ຄືເກົ່າ ຫຼື ຈະເກັບເພີ່ມສ່ວນທີ່ເຫຼືອໃຫ້ໄດ້ 750 $.
- ສຳລັບເງິນຄ້ຳປະກັນ 750 $, ຄຳແນະ 0457 ໄດ້ກຳນົດແບ່ງມອບ 30% 30% ແລະ 40% ຄວນກຳນົດລະອຽດ ຄວນແບ່ງມອບໃນປີໃດໃນອາຍຸສັນຍາ ຈຶ່ງຈະເໝາະສົມ.



# ຂໍເຊີນບັນດາ ທ່ານ ແລກປ່ຽນຄໍາຄິດຄໍາເຫັນຮ່ວມກັນ

# ຂໍຂອບໃຈ!

Food and Agriculture Organization of the United Nations

ສະຫະພາບ ເອີຣົບ
European Union

german cooperation
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH